ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 191/ລບ
ນະຄອນຫຼວງວຽງຈັນ, ວັນທີ 7 ເມສາ 2023

# ດຳລັດ
# ວ່າດ້ວຍ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0683/ອຄ, ລົງວັນທີ 02 ມິຖຸນາ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ເພື່ອເປັນບ່ອນອີງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການປັບໃໝ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການເຄື່ອນໄຫວກ່ຽວກັບມາດຕະຖານ ຖືກຕ້ອງຕາມກົດໝາຍ, ຮັບປະກັນຄວາມປອດໄພ, ຄວາມຍຸຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ຊົມໃຊ້ ແລະ ຜູ້ປະກອບການ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບມາດຕະຖານ.

ການນຳໃຊ້ມາດຕະການອື່ນ ແມ່ນ ການນຳໃຊ້ມາດຕະການເພີ່ມ ຈາກມາດຕະການປັບໃໝ ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບມາດຕະຖານ ເປັນຕົ້ນ ການໂຈະ, ຖອນ ໃບຢັ້ງຢືນ,

ຮຽກຄືນ, ຍຶດ, ທຳລາຍ ແລະ ການສົ່ງອອກຄືນ ຜະລິດຕະພັນ ແລະ ສິນຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກົດລະຫັດ (Barcode)** ໝາຍເຖິງ ສັນຍາລັກທີ່ເປັນ ເສັ້ນຕັ້ງ, ຄື້ນຄວາມຖີ່ວິທະຍຸ ຫຼື ແຖ່ງລະຫັດ ຊຶ່ງເປັນຕົວແທນຂອງຕົວເລກ ທີ່ສາມາດອ່ານໄດ້ ໂດຍເຄື່ອງອ່ານກົດລະຫັດ;

2. **ກາໝາຍຄຸນນະພາບ (Qmark)** ໝາຍເຖິງ ກາໝາຍທີ່ຢັ້ງຢືນວ່າ ຜະລິດຕະພັນ ແລະ ສິນຄ້າ ໄດ້ຜ່ານການກວດສອບ ແລະ ຢັ້ງຢືນຄຸນນະພາບ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;

3. **ກາໝາຍການຮັບຮອງ** ໝາຍເຖິງ ກາໝາຍທີ່ຮັບຮູ້ຈາກອົງການຈັດຕັ້ງສາກົນ ເພື່ອຮັບຮອງຄວາມອາດສາມາດ ຂອງອົງການຢັ້ງຢືນ, ອົງການກວດກາ, ຫ້ອງທົດລອງກວດສອບ ແລະ ຫ້ອງທົດລອງສອບທຽບ;

4. **ການກວດສອບຄຸນນະພາບແບບບໍ່ທຳລາຍ** ໝາຍເຖິງ ການກວດສອບຫາຄຸນສົມບັດ, ສະມັດຕະພາບ ແລະ ຄວາມເສຍຫາຍທີ່ເກີດຂຶ້ນໃນວັດສະດຸ, ໂຄງສ້າງ ແລະ ຜະລິດຕະພັນສິນຄ້າ ໂດຍບໍ່ໃຫ້ເກີດຄວາມເສຍຫາຍຕໍ່ຮູບຮ່າງ, ຂະໜາດ ຫຼື ຄຸນສົມບັດ ຂອງສິ່ງທີ່ກວດສອບ.

**ມາດຕາ 4 ຫຼັກການກ່ຽວກັບການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຢູ່ ສປປ ລາວ.

## ໝວດທີ 2
## ອັດຕາການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ

**ມາດຕາ 6 ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ**

ພຶດຕິກຳ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ມີດັ່ງນີ້:

1. ການຜະລິດ, ຈຳໜ່າຍ ແລະ ສົ່ງອອກ ຜະລິດຕະພັນ ແລະ ສິນຄ້າ ທີ່ບໍ່ສອດຄ່ອງຕາມມາດຕະຖານ ແລະ ລະບຽບການເຕັກນິກ;

2. ການນຳເຂົ້າ ຜະລິດຕະພັນ ແລະ ສິນຄ້າ ທີ່ບໍ່ສອດຄ່ອງຕາມມາດຕະຖານ ແລະ ລະບຽບການເຕັກນິກ;

3. ການນຳໃຊ້ ກາໝາຍມາດຕະຖານແຫ່ງຊາດລາວ ແລະ ກາໝາຍຄຸນນະພາບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ການນຳໃຊ້ ຄຳສັບມາດຕະຖານແຫ່ງຊາດລາວ ຫຼື ຄຳສັບ ແລະ ເຄື່ອງໝາຍອື່ນ ທີ່ຄ້າຍຄືກັນກັບກາໝາຍ ທີ່ພາໃຫ້ເຂົ້າໃຈຜິດກັບກາໝາຍມາດຕະຖານແຫ່ງຊາດລາວ ແລະ ກາໝາຍຄຸນນະພາບ ໂດຍບໍ່ໄດ້ຮັບອະນຸຍາດ;

5. ການນຳໃຊ້ ໃບຢັ້ງຢືນກາໝາຍມາດຕະຖານແຫ່ງຊາດລາວ ແລະ ກາໝາຍຄຸນນະພາບ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;

6. ການນຳໃຊ້ ໃບຢັ້ງຢືນລະບົບຄຸ້ມຄອງ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;

7. ການນຳໃຊ້ ໃບຢັ້ງຢືນການຮັບຮອງລະບົບມາດຕະຖານສາກົນ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;

8. ການນຳໃຊ້ ໃບຢັ້ງຢືນການກວດສອບຄຸນນະພາບແບບບໍ່ທຳລາຍ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;

9. ກາໝາຍການຮັບຮອງ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງຕາມມາດຕະຖານສາກົນ;

10. ການນຳໃຊ້ກົດລະຫັດ ທີ່ບໍ່ສອດຄ່ອງຕາມລະບຽບການ;

11. ການນຳໃຊ້ປຶ້ມມາດຕະຖານແຫ່ງຊາດລາວ ທີ່ບໍ່ສອດຄ່ອງຕາມລະບຽບການ.

**ມາດຕາ 7 ອັດຕາການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳ ເປັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້ ໂດຍເຈດຕະນາ ຫຼື ບໍ່ເຈດຕະນາ ເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 8 ພື້ນຖານການຄິດໄລ່ຄວາມເສຍຫາຍ**

ພື້ນຖານການຄິດໄລ່ຄວາມເສຍຫາຍໃຫ້ປະຕິບັດຕາມກໍລະນີ ດັ່ງນີ້:

1. ຄວາມເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 1 ແລະ ຂໍ້ 2 ຂອງດຳລັດສະບັບນີ້ ໃຫ້ອີງໃສ່ມູນຄ່າຂອງສິນຄ້າທີ່ກວດພົບ ເປັນພື້ນຖານການຄິດໄລ່;

2. ຄວາມເສຍຫາຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 3 ຫາ ຂໍ້ 11 ຂອງດຳລັດສະບັບນີ້ ໃຫ້ອີງໃສ່ຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນແຕ່ລະໄລຍະ, ມູນຄ່າສິ້ນເປືອງຂອງຂະບວນການຢັ້ງຢືນ ແລະ ມູນຄ່າການກວດສອບຕົວຈິງ ເປັນພື້ນຖານການຄິດໄລ່.

**ມາດຕາ 9 ມາດຕະການອື່ນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳ ເປັນການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້ ນອກຈາກຈະຖືກປັບໃໝຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງດຳລັດສະບັບນີ້ ຍັງຈະຖືກນຳໃຊ້ມາດຕະການອື່ນຕາມແຕ່ກໍລະນີ ດັ່ງນີ້:

1. ການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 1 ແລະ ຂໍ້ 2 ຈະຖືກ ຮຽກຄືນ, ຍຶດ, ທຳລາຍ ແລະ ສົ່ງອອກຄືນ ຜະລິດຕະພັນ ແລະ ສິນຄ້າ;

2. ການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 3 ຫາ ຂໍ້ 11 ຈະຖືກ ຍຶດຜະລິດຕະພັນ ແລະ ສິນຄ້າ, ໂຈະ, ຖອນ, ຍົກເລີກໃບຢັ້ງຢືນ ແລະ ກາໝາຍ.

## ໝວດທີ 3
## ການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ

**ມາດຕາ 10 ການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ໂດຍປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ອົງການຈັດຕັ້ງປະຕິບັດການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນ ກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງແມ່ນ ກົມມາດຕະຖານ ແລະ ວັດແທກ;
2. ຂັ້ນທ້ອງຖິ່ນ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ໃນການປັບໃໝ ແລະ ການນຳໃຊ້ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຕາມການແບ່ງຂັ້ນຄຸ້ມຄອງແຕ່ລະໄລຍະ ມີກໍລະນີ ດັ່ງນີ້:

1. ການຜະລິດ, ຈຳໜ່າຍ ແລະ ສົ່ງອອກ ຜະລິດຕະພັນ ແລະ ສິນຄ້າ ທີ່ບໍ່ສອດຄ່ອງຕາມມາດຕະຖານ ແລະ ລະບຽບການເຕັກນິກ;
2. ການນຳເຂົ້າ ຜະລິດຕະພັນ ແລະ ສິນຄ້າ ທີ່ບໍ່ສອດຄ່ອງຕາມມາດຕະຖານ ແລະ ລະບຽບການເຕັກນິກ;
3. ການນຳໃຊ້ ໃບຢັ້ງຢືນລະບົບຄຸ້ມຄອງ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;
4. ການນຳໃຊ້ ໃບຢັ້ງຢືນການຮັບຮອງລະບົບມາດຕະຖານສາກົນ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;
5. ການນຳໃຊ້ ໃບຢັ້ງຢືນການກວດສອບຄຸນນະພາບແບບບໍ່ທຳລາຍ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້;
6. ກາໝາຍການຮັບຮອງ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ບໍ່ສອດຄ່ອງຕາມມາດຕະຖານສາກົນ;
7. ການນຳໃຊ້ ກົດລະຫັດ ທີ່ບໍ່ສອດຄ່ອງຕາມລະບຽບການ;
8. ການນຳໃຊ້ປຶ້ມມາດຕະຖານແຫ່ງຊາດລາວ ທີ່ບໍ່ສອດຄ່ອງຕາມລະບຽບການ.

**ມາດຕາ 12 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ໃນການປັບໃໝ ແລະ ການນຳໃຊ້ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຕາມການແບ່ງຂັ້ນຄຸ້ມຄອງແຕ່ລະໄລຍະ ມີກໍລະນີ ດັ່ງນີ້:

1. ການນຳໃຊ້ ກາໝາຍມາດຕະຖານແຫ່ງຊາດລາວ ແລະ ກາໝາຍຄຸນນະພາບ ໂດຍບໍ່ໄດ້ຮັບອະນຸຍາດ;

2. ການນຳໃຊ້ ຄຳສັບມາດຕະຖານແຫ່ງຊາດລາວ ຫຼື ຄຳສັບ ແລະ ເຄື່ອງໝາຍອື່ນ ທີ່ຄ້າຍຄືກັນກັບກາໝາຍ ທີ່ພາໃຫ້ເຂົ້າໃຈຜິດກັບກາໝາຍມາດຕະຖານແຫ່ງຊາດລາວ ແລະ ກາໝາຍຄຸນນະພາບ ໂດຍບໍ່ໄດ້ຮັບອະນຸຍາດ;

3. ການນຳໃຊ້ ໃບຢັ້ງຢືນກາໝາຍມາດຕະຖານແຫ່ງຊາດລາວ ແລະ ກາໝາຍຄຸນນະພາບ ທີ່ຖືກຍົກເລີກ ຫຼື ໝົດອາຍຸການນຳໃຊ້.

**ມາດຕາ 13 ຄວາມຮັບຜິດຊອບຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃນການໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກໃນການຈັດຕັ້ງເຄື່ອນໄຫວວຽກງານ, ປະກອບສ່ວນໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສະໜອງຂໍ້ມູນ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ຕາມພາລະບົດບາດຂອງຕົນ.

## ໝວດທີ 4
## ການຄຸ້ມຄອງ ແລະ ນຳໃຊ້ ຜະລິດຕະພັນ ແລະ ສິນຄ້າ ທີ່ຖືກ ຮຽກຄືນ, ຍຶດ ແລະ ການນຳໃຊ້ເງິນຈາກການປັບໃໝ

**ມາດຕາ 14 ການຄຸ້ມຄອງ ແລະ ນຳໃຊ້ ຜະລິດຕະພັນ ແລະ ສິນຄ້າ ທີ່ຖືກ ຮຽກຄືນ ແລະ ຍຶດ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ຜະລິດຕະພັນ ແລະ ສິນຄ້າ ທີ່ຖືກ ຮຽກຄືນ ແລະ ຍຶດ ຈາກການລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບມາດຕະຖານ ດັ່ງນີ້:

ຜະລິດຕະພັນ ແລະ ສິນຄ້າ ທີ່ໄດ້ຄຸນນະພາບ ຕ້ອງເກັບມ້ຽນ ແລະ ປົກປັກຮັກສາໃນສະຖານທີ່ ແລະ ເງື່ອນໄຂທີ່ເໝາະສົມ ເພື່ອນຳໄປໃຊ້ໃນການເຄື່ອນໄຫວວຽກງານໃຫ້ເກີດຜົນປະໂຫຍດສູງສຸດ ເປັນຕົ້ນ ນຳໄປຊ່ວຍເຫຼືອສັງຄົມ, ນຳໃຊ້ໃນວຽກງານລັດຖະການ ຫຼື ປະມູນຂາຍ ຕາມກົດໝາຍ ແລະ ລະບຽບການ.

ຜະລິດຕະພັນ ແລະ ສິນຄ້າ ທີ່ບໍ່ໄດ້ຄຸນນະພາບ ຕ້ອງນຳເອົາໄປທຳລາຍ.

**ມາດຕາ 15 ການຄຸ້ມຄອງ ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕາມດຳລັດສະບັບນີ້ 60% (ຫົກສິບສ່ວນຮ້ອຍ) ມອບເຂົ້າງົບປະມານແຫ່ງລັດ ສ່ວນເງິນທີ່ເຫຼືອ 40% (ສີ່ສິບສ່ວນຮ້ອຍ) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ໂດຍໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເປີດບັນຊີຄຸ້ມຄອງຜ່ານລະບົບຄັງເງິນແຫ່ງຊາດ ແລະ ຂຶ້ນແຜນການນຳໃຊ້ງົບປະມານ ເພື່ອນຳໃຊ້ບໍລິຫານວຽກງານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງດຳລັດສະບັບນີ້. ສຳລັບການ ຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແມ່ນຜູ້ສັ່ງການ ຫຼື ຜູ້ຖືກມອບສິດ ເປັນຜູ້ອະນຸມັດແຕ່ລະຄັ້ງ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 16 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕ້ອງນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ປູກຈິດສຳນຶກໃຫ້ສັງຄົມເຫັນຄວາມສຳຄັນກ່ຽວກັບວຽກງານມາດຕະຖານ;
2. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານກ່ຽວກັບມາດຕະຖານ;
3. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ;
4. ການເກັບມ້ຽນ, ການປົກປັກຮັກສາ, ຄ່າຝາກສາງ ແລະ ທຳລາຍຜະລິດຕະພັນ ແລະ ສິນຄ້າທີ່ຍຶດມາໄດ້;
5. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່;

6. ວຽກງານອື່ນ ກ່ຽວກັບມາດຕະຖານ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ດຳລັດ ສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 09 ພຶດສະພາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**